ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ:..0528...../ກສຂ

ຫົວພັນ, ວັນທີ: .5...9..: 2026

**ໜັງສືແຈ້ງເຊີນເຂົ້າຮ່ວມການສົມທຽບລາຄາ**

**ການຈັດຊື້ ອຸປະກອນ ແລະ ແນວພັນເບ້ຍກາເຟ ໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ, ແຂວງຫົວພັນ**

1. ລັດຖະບານແຫ່ງ ສສປ ລາວ ໄດ້ຮັບເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອ ຈາກທະນາຄານພັດທະນາອາຊີ ເພື່ອໃຊ້ຈ່າຍສຳລັບ ໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (SRIWSM) ເຊິ່ງສ່ວນໜຶ່ງຂອງທຶນດັ່ງກ່າວ ແມ່ນຈະນຳໃຊ້ເຂົ້າໃນການຈັດຊື້-ຈັດຈ້າງ ລະຫັດສັນຍາ PLUP-HP-G05.
2. ພະແນກກະສິກຳ ແລະ ສິ່ງແວດລ້ອມຂໍເຊີນບໍລິສັດ/ຮ້ານຂອງທ່ານເຂົ້າຮ່ວມຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ ອຸປະກອນ ແລະ ແນວພັນເບ້ຍກາເຟ ໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ, ແຂວງຫົວພັນ.
3. ການສົມທຽບລາຄາ ແມ່ນດຳເນີນຕາມຂັ້ນຕອນ ທີ່ໄດ້ລະບຸໄວ້ໃນນະໂຍບາຍ ແລະ ລະບຽບການຈັດຊື້-ຈັດຈ້າງ ຂອງທະນາຄານພັດທະນາອາຊີ (ປີ 2017 ແລະ ສະບັບທີ່ປັບປຸງເປັນໄລຍະ).
4. ຜູ້ທີ່ມີຄວາມສົນໃຈ ສາມາດສອບຖາມລາຍລະອຽດຂອງການຈັດຊື້ດັ່ງກ່າວ ໃນເວລາໂມງລັດຖະການຕາມທີ່ຢູ່ຂ້າງລຸ່ມນີ້.
5. ຜູ້ທີ່ມີຄວາມສົນໃຈ ສາມາດຍື່ນໜັງສືສະໜີຂໍຮັບ ເອກະສານສົມທຽບລາຄາ ຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມນີ້ ໃນວັນ ແລະ ເວລາ ລັດຖະການ. ຖ້າຫາກມີຂໍ້ຂ້ອງໃຈ, ໃຫ້ຕິດຕໍ່ສອບຖາມ: ເບີໂທລະສັບ: 020 5895 5456; ອີເມລ: chitsoukjalern@gmail.com (ຜູ້ປະສານງານໂຄງການ) ຫຼື ເບີໂທລະສັບ: 020 5942 2945 ; ອີເມລ: thomsou_licntham@gmail.com (ຜູ້ຊ່ວຍຈັດຊື້-ຈັດຈ້າງ).
6. ເອກະສານສະເໜີລາຄາ ຕ້ອງສົ່ງກ່ອນ ຫຼື ໃນເວລາ **10:00** ໂມງ ວັນທີ **4 ກັນຍາ 2026** ຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມ. ການເປີດຊອງສົມທຽບລາຄາຈະໄດ້ຖືກເປີດຢ່າງເປັນທາງ ໂດຍຊ້ອງໜ້າຂອງຄະນະກຳມະການປະມູນ, ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມ **10:00** ໂມງ ວັນທີ **4 ກັນຍາ 2026** 2026 ຢູ່ສະຖານທີ່ງກຳນົດໄວ້ຂ້າງລຸ່ມ. ການສົ່ງດ້ວຍລະບົບເອເລັກໂຕນິກຈະບໍ່ອະນຸຍາດ.
7. ເງື່ອນໄຂການເຂົ້າຮ່ວມສົມທຽບລາຄາ ແລະ ແບບຟອມອື່ນໆ ແມ່ນກຳນົດໃນ ເອກະສານສະເໜີລາຄາ.
8. ທີ່ຢູ່ທີ່ເວົ້າເຖິງຢູ່ຂ້າງເທິງນີ້ແມ່ນ:

   ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ. ຖະໜົນໜອງຄ້າງ, ບ້ານ ທາດເມືອງ, ເມືອງ ຊຳເໜືອ, ແຂວງຫົວພັນ, ສປປ ລາວ.

   ເບີໂທລະສັບ +856 020 5895 5456

   ອີເມລ: chitsoukjalern@gmail.com

ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ

ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ

ໃຈເພັດ ເຮືອງຖາວອນ